# ທຄຕລ ເປັນທະນາຄານທຳອິດໃນ ສປປ ລາວ ທີ່ໄດ້ຮັບການຄັດເລືອກ ແລະ ອະນຸຍາດໃຫ້ເປີດ ບໍລິການລະບົບໂອນເງິນຂ້າມແດນຈາກ ສ. ເກົາຫຼີດ້ວຍມືຖື ຜ່ານແອັບ BCELOne




ໃນຕອນບ່າຍຂອງວັນພຸດ ວັນທີ 25 ຕຸລາ 2023, ໄດ້ມີການຈັດພິທີເຊັນສັນຍາລະຫວ່າງ **BCEL** ແລະ ບໍລິສັດ **GLN Internatrional Inc** ສ. ເກົາຫຼີ ພ້ອມດ້ວຍການເປີດໂຕ ການໃຫ້ບໍລິການໂອນເງິນຂ້າມແດນ ລະຫວ່າງ ສປປ ລາວ ແລະ ສ. ເກົາຫຼີ ຢ່າງເປັນທາງການ ຢູ່ທີ່ ໂຮງແຮມລາວພຣາຊາ ນະຄອນຫຼວງວຽງຈັນ.

ເປັນກຽດເຂົ້າຮ່ວມເປັນສັກຂີພະຍານໂດຍ ທ່ານ ພິງໄຊສັກ ອິນຖາລາດ ຮອງລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ທ່ານ ນາງ ຂັນແກ້ວ ຫຼ້າມະນີເງົາ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ, Mr Jung Yung Soo ເອກອັກຄະລັດຖະທູດ ສາທະລະນະລັດ ເກົາຫຼີ ປະຈຳ ສປປ ລາວ, ພ້ອມດ້ວຍບັນດາຫົວໜ້າກົມ, ຄະນະກົມ ຈາກກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ທະນາຄານແຫ່ງ ສປປ ລາວ ພ້ອມດ້ວຍຄະນະອຳນວຍການ, ຄະນະພະແນກ ແລະ ພະນັກງານຂອງ BCEL ພາຍໃນນະຄອນຫຼວງວຽງຈັນ ພ້ອມດ້ວຍສື່ມວນຊົນຈາກຫຼາຍພາກສ່ວນກໍ່ໄດ້ໃຫ້ກຽດເຂົ້າຮ່ວມຢ່າງພ້ອມພຽງ.



ໃຫ້ກຽດຕາງໜ້າລົງນາມການຮ່ວມມືໃນຄັ້ງນີ້ໂດຍ ທ່ານ ສາຍຈິດ ສີມມະວົງ ຮອງຜູ້ອຳນວຍການ **BCEL** ແລະ ທ່ານ Kim Kyung-ho ຜູ້ອຳນວຍການ ບໍລິສັດ **GLN Internatrional Inc.**




ການພັດທະນາລະບົບການໂອນເງິນຂ້າມແດນລະຫວ່າງ ສປປ ລາວ ແລະ ສ. ເກົາຫຼີ ໃນຄັ້ງນີ້, ກໍ່ເພື່ອເປັນການອຳນວຍຄວາມສະດວກໃຫ້ລູກຄ້າທີ່ຢູ່ ສ. ເກົາຫຼີ ໃຫ້ສາມາດໂອນເງິນຂ້າມແດນ ຈາກ ສ. ເກົາຫຼີ ➡️ສປປ ລາວ ໄດ້ຢ່າງສະດວກສະບາຍ, ມີຄວາມປອດໄພ, ມີຄ່າທຳນຽມທີ່ຕ່ຳກວ່າ, ພ້ອມທັງສາມາດເຮັດທຸລະກຳໄດ້ຕະຫລອດ 24 ຊົ່ວໂມງ .

ລະບົບດັ່ງກ່າວ ຈະເລີ່ມເປີດບໍລິການໃຫ້ທົດລອງນຳໃຊ້ໃນທ້າຍປີ 2023 ແລະ ເປີດນຳໃຊ້ລະບົບເຕັມຮູບແບບໃນຕົ້ນປີ 2024 ນີ້.

#BCEL #GLN
#DigitalRemittance #InnovativePayment
#LaoPDR #RepublicofKorea

-------------------------------------

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ທັນສະໄໝ ວ່ອງໄວ ໝັ້ນໃຈ

ຂຽນຂ່າວ ແລະ ຖ່າຍພາບໂດຍ: ພະແນກການຕະຫຼາດ ແລະ ບໍລິການລູກຄ້າລາຍໃຫຍ່